ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ກົມຈັດຕັ້ງແລະພະນັກງານ

ເລກທີ 92 /ກຈພ
ນະຄອນຫຼວງວຽງຈັນ, ວັນທີ 09 JUN 2017

ສໍານັກງານ ຄຄຊ
ເລກທີ 0641
ວັນທີ ... JUN 2017
ໂທລະສັບ 021 217770

# ແຈ້ງການ

**ເຖິງ:** ທ່ານ ຫົວໜ້າກົມ-ທຽບເທົ່າພາຍໃນ ທະນາຄານແຫ່ງ ສປປ ລາວ.
ທ່ານ ຜູ້ອໍານວຍການທະນາຄານທຸລະກິດລັດ-ລັດຮຸ້ນສ່ວນ.

**ເລື່ອງ:** ການປັບປຸງການຈັດຕັ້ງຢູ່ທະນາຄານແຫ່ງ ສປປ ລາວ.

- ອີງຕາມພາລະບົດບາດຂອງກົມຈັດຕັ້ງແລະພະນັກງານ ທະນາຄານແຫ່ງ ສປປ ລາວ ສະບັບເລກທີ 923/ທຫລ ລົງວັນທີ 10 ພະຈິກ 2014 ແລະ ອີງຕາມການຕົກລົງເຫັນດີຂອງຂັ້ນເທິງ.

ກົມຈັດຕັ້ງແລະພະນັກງານ ຂໍຖືເປັນກຽດແຈ້ງມາຍັງທ່ານ ຊາບວ່າ: ໃນໄລຍະເດືອນ 4-5/2017 ຜ່ານມາ, ຢູ່ທະນາຄານແຫ່ງ ສປປ ລາວ ໄດ້ມີການປັບປຸງການຈັດຕັ້ງຂັ້ນຄະນະກົມ ແລະ ຄະນະພະແນກຈໍານວນໜຶ່ງ. ສະນັ້ນ, ຈຶ່ງແຈ້ງມາຍັງການຈັດຕັ້ງກ່ຽວຂ້ອງຊາບ ຕໍ່ການປັບປຸງການຈັດຕັ້ງດັ່ງກ່າວ, ລາຍລະອຽດດັ່ງນີ້:

## I. ຍົກຍ້າຍ, ແຕ່ງຕັ້ງ ແລະ ສັບປ່ຽນໜ້າທີ່ບ່ອນປະຈໍາການພະນັກງານ:

❖ ຂັ້ນຄະນະກົມ:

1. ຍົກຍ້າຍ ແລະ ແຕ່ງຕັ້ງ**ທ່ານ ວິສອນ ໄຊສີງຄາມ** ຮອງຫົວໜ້າກົມຄຸ້ມຄອງສະຖາບັນການເງິນ ເປັນວ່າການຫົວໜ້າສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງຊຽງຂວາງ;

2. ແຕ່ງຕັ້ງ**ທ່ານ ດອນສະຖຽນ ບຸນມີອາໄພ** ເປັນຮອງຫົວໜ້າສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງຊຽງຂວາງ;

3. ຍົກຍ້າຍ ແລະ ແຕ່ງຕັ້ງ**ທ່ານ ມະໂນສິນ ຕັນດາວົງ** ຫົວໜ້າພະແນກກວດກາກັບທີ່, ກົມຄຸ້ມຄອງສະຖາບັນການເງິນ ເປັນຮອງຫົວໜ້າສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງຊຽງຂວາງ;

4. ຍົກຍ້າຍ ແລະ ແຕ່ງຕັ້ງ**ທ່ານ ລະຄອນຄໍາ ສຸວັນນະວົງສາ** ຫົວໜ້າພະແນກຕິດຕາມແລະກວດກາ, ສໍານັກງານຂໍ້ມູນຕ້ານການຟອກເງິນ ເປັນຮອງຫົວໜ້າສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງຫຼວງພະບາງ;

❖ ຂັ້ນຄະນະພະແນກ:

➲ ສູນບໍລິການເກັບຊື້ໜີ້ແລະຮັບຝາກເກັບໜີ້:

1. ຍົກຍ້າຍ ແລະ ແຕ່ງຕັ້ງທ່ານ **ນ. ມະນີວັນ ພົນຈັກຂັນ** ຮອງຫົວໜ້າພະແນກບໍລິຫານ-ການເງິນ ເປັນຮອງຫົວໜ້າພະແນກນິຕິກຳ, ສູນບໍລິການເກັບຊື້ໜີ້ແລະຮັບຝາກເກັບໜີ້;

2. ຍົກຍ້າຍ ແລະ ແຕ່ງຕັ້ງທ່ານ **ສົມໃຈ ເຊຍປາວຊົ່ງ** ຮອງຫົວໜ້າພະແນກນິຕິກຳ ເປັນຮອງຫົວໜ້າພະແນກບໍລິຫານ-ການເງິນ, ສູນບໍລິການເກັບຊື້ໜີ້ແລະຮັບຝາກເກັບໜີ້.

➲ ກົມນະໂຍບາຍເງິນຕາ:

1. ແຕ່ງຕັ້ງທ່ານ **ນ. ເພັດສະໝອນ ແສງຈັນ** ຮອງຫົວໜ້າພະແນກນະໂຍບາຍເງິນຕາແລະອັດຕາແລກປ່ຽນ ເປັນຫົວໜ້າພະແນກນະໂຍບາຍເງິນຕາແລະອັດຕາແລກປ່ຽນ, ກົມນະໂຍບາຍເງິນຕາ;

2. ແຕ່ງຕັ້ງທ່ານ **ວຽງນະຄອນ ຂະຫຸນພົມ** ຮອງຫົວໜ້າພະແນກສະຖິຕິເງິນຕາ-ການເງິນ ເປັນຫົວໜ້າພະແນກສະຖິຕິເງິນຕາ-ການເງິນ, ກົມນະໂຍບາຍເງິນຕາ;

3. ແຕ່ງຕັ້ງທ່ານ **ນ. ພຸດດາວັນ ສີຣິສົມບັດ** ຮອງຫົວໜ້າພະແນກຄຸ້ມຄອງເງິນຕາຕ່າງປະເທດ ເປັນວ່າການຫົວໜ້າພະແນກຄຸ້ມຄອງເງິນຕາຕ່າງປະເທດ, ກົມນະໂຍບາຍເງິນຕາ;

4. ແຕ່ງຕັ້ງທ່ານ **ນ. ສຸພາພອນ ແສນລາດ** ວິຊາການ ເປັນຮອງຫົວໜ້າພະແນກນະໂຍບາຍເງິນຕາແລະອັດຕາແລກປ່ຽນ, ກົມນະໂຍບາຍເງິນຕາ;

5. ແຕ່ງຕັ້ງທ່ານ ນ. ແສງດາລາ ວິຊຸນນອນ ວິຊາການ ເປັນຮອງຫົວໜ້າພະແນກສະຖິຕິເງິນຕາ-ການເງິນ, ກົມນະໂຍບາຍເງິນຕາ;

6. ແຕ່ງຕັ້ງທ່ານ **ນ. ກິ່ນນາລີ ຈັນທະວົງ** ວິຊາການ ເປັນຮອງຫົວໜ້າພະແນກສະຖິຕິເງິນຕາ-ການເງິນ, ກົມນະໂຍບາຍເງິນຕາ;

➲ ກົມພົວພັນສາກົນ:

1. ແຕ່ງຕັ້ງທ່ານ **ນ. ປານິດຕາ ແສນມັງທອງ** ຮັກສາການຫົວໜ້າພະແນກທະນາຄານກາງ, ກອງທຶນ ແລະມູນນິທິຕ່າງປະເທດ ເປັນຫົວໜ້າພະແນກທະນາຄານກາງ, ກອງທຶນແລະມູນນິທິຕ່າງປະເທດ, ກົມພົວພັນສາກົນ;

2. ຍົກຍ້າຍ ແລະ ແຕ່ງຕັ້ງທ່ານ **ພູວຽງ ບານຈັນທະວົງ** ຮອງຫົວໜ້າພະແນກອົງການຈັດຕັ້ງແລະສະຖາບັນການເງິນສາກົນ ເປັນຮອງຫົວໜ້າພະແນກທະນາຄານກາງ, ກອງທຶນແລະມູນນິທິຕ່າງປະເທດ, ກົມພົວພັນສາກົນ;

3. ແຕ່ງຕັ້ງທ່ານ **ນ. ຈັນເທວີວັນ ແກ້ວບຸນພັນ** ຮອງຫົວໜ້າພະແນກອາຊຽນ-ອີຢູ ເປັນວ່າການຫົວໜ້າພະແນກອາຊຽນ-ອີຢູ, ກົມພົວພັນສາກົນ;

4. ຍົກຍ້າຍ ແລະ ແຕ່ງຕັ້ງທ່ານ **ສິດທະພອນ ທິທະວົງ** ຮອງຫົວໜ້າພະແນກທະນາຄານກາງ, ກອງທຶນແລະມູນນິທິຕ່າງປະເທດ ເປັນຮອງຫົວໜ້າພະແນກອາຊຽນ-ອີຢູ, ກົມພົວພັນສາກົນ;

5. ຍົກຍ້າຍ ແລະ ແຕ່ງຕັ້ງທ່ານ **ນ. ມາລິນີ ຊາວັນນາ** ຮອງຫົວໜ້າພະແນກອາຊຽນ-ອີຢູ ເປັນວ່າການຫົວໜ້າພະແນກອົງການຈັດຕັ້ງແລະສະຖາບັນການເງິນສາກົນ, ກົມພົວພັນສາກົນ;

6. ຍົກຍ້າຍ ແລະ ແຕ່ງຕັ້ງທ່ານ **ນ. ບຸຜາວະລີ ສຸດທະວົງ** ຮອງຫົວໜ້າພະແນກທະນາຄານກາງ, ກອງທຶນແລະມູນນິທິຕ່າງປະເທດ ເປັນຮອງຫົວໜ້າພະແນກອົງການຈັດຕັ້ງແລະສະຖາບັນການເງິນສາກົນ, ກົມພົວພັນສາກົນ;

7. ແຕ່ງຕັ້ງ**ທ່ານ ນ. ອານິດາ ສີງຫາອາຮາ** ວິຊາການ ເປັນຮອງຫົວໜ້າພະແນກທະນາຄານກາງ, ກອງທຶນແລະມູນນິທິຕ່າງປະເທດ, ກົມພົວພັນສາກົນ.

➲ <u>**ສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງຫຼວງພະບາງ:**</u>

1. ຍົກຍ້າຍ ແລະ ແຕ່ງຕັ້ງ**ທ່ານ ສັງທອງ ຄູນຄຳ** ຫົວໜ້າພະແນກສາງ-ຄັງເງິນສົດ ເປັນຫົວໜ້າພະແນກບໍລິການ-ການບັນຊີ, ສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງຫຼວງພະບາງ;

2. ຍົກຍ້າຍ ແລະ ແຕ່ງຕັ້ງ**ທ່ານ ວິໄລວັນ ສຸນດາລາ** ຮອງຫົວໜ້າພະແນກບໍລິການ-ການບັນຊີ ເປັນວ່າການຫົວໜ້າພະແນກສາງ-ຄັງເງິນສົດ, ສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງຫຼວງພະບາງ;

3. ແຕ່ງຕັ້ງ**ທ່ານ ນ. ລັດດາວອນ ວົງສາ** ວິຊາການ ເປັນຮອງຫົວໜ້າພະແນກບໍລິການ-ການບັນຊີ, ສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງຫຼວງພະບາງ;

4. ແຕ່ງຕັ້ງ**ທ່ານ ນ. ແສງສົມພະບຸດ ຍອດສົມເພືອງ** ວິຊາການ ເປັນຮອງຫົວໜ້າພະແນກເສດຖະກິດ-ເງິນຕາ ແລະ ຄຸ້ມຄອງເງິນຕາຕ່າງປະເທດ, ສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງຫຼວງພະບາງ.

➲ <u>**ສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງຊຽງຂວາງ:**</u>

1. ຍົກຍ້າຍ ແລະ ແຕ່ງຕັ້ງ**ທ່ານ ຈັນທະໂຄລິບ ຈັນທະມາດ** ຫົວໜ້າພະແນກກວດກາພາຍໃນ, ສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງຫຼວງພະບາງ ເປັນຫົວໜ້າພະແນກກວດກາພາຍໃນ, ສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງຊຽງຂວາງ;

2. ຍົກຍ້າຍ ແລະ ແຕ່ງຕັ້ງ**ທ່ານ ຈິດຕະພັນ ລັດຕະນະພູໄບ** ຮອງຫົວໜ້າພະແນກຫ້ອງການ-ຈັດຕັ້ງ, ສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງຫຼວງພະບາງ ເປັນຮອງຫົວໜ້າພະແນກຫ້ອງການ-ຈັດຕັ້ງ, ສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງຊຽງຂວາງ;

3. ຍົກຍ້າຍ ແລະ ແຕ່ງຕັ້ງ**ທ່ານ ນ. ພອນທິບ ເພັງໂສພາ** ຮອງຫົວໜ້າພະແນກບັນຊີ-ບໍລິການ, ກົມບໍລິການທະນາຄານ ເປັນວ່າການຫົວໜ້າພະແນກບໍລິການ-ການບັນຊີ, ສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງຊຽງຂວາງ;

4. ຍົກຍ້າຍ ແລະ ແຕ່ງຕັ້ງ**ທ່ານ ອານຸສອນ ຫຼວງປັນຍາ** ວິຊາການກົມບໍລິການທະນາຄານ ເປັນຮອງຫົວໜ້າພະແນກສາງ-ຄັງເງິນສົດ, ສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງຊຽງຂວາງ;

5. ຍົກຍ້າຍ ແລະ ແຕ່ງຕັ້ງ**ທ່ານ ນ. ສຸລິຍາ ເລື່ອງພັນໄຊ** ວິຊາການກົມບໍລິການທະນາຄານ ເປັນຮອງຫົວໜ້າພະແນກຫ້ອງການ-ຈັດຕັ້ງ, ສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງຊຽງຂວາງ;

6. ຍົກຍ້າຍ ແລະ ແຕ່ງຕັ້ງ**ທ່ານ ວຽງວິໄລ ສຸດທິຈັກ** ຮັກສາການຫົວໜ້າພະແນກອົງການຈັດຕັ້ງແລະສະຖາບັນການເງິນສາກົນ, ກົມພົວພັນສາກົນ ເປັນວ່າການຫົວໜ້າພະແນກເສດຖະກິດ-ເງິນຕາ ແລະຄຸ້ມຄອງເງິນຕາຕ່າງປະເທດ, ສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງຊຽງຂວາງ;

7. ຍົກຍ້າຍ ແລະ ແຕ່ງຕັ້ງ**ທ່ານ ນ. ໜອມ ຫຼວງວິໄລ** ຜູ້ກວດກາປະຈຳກົມ, ກົມເງິນຕາ ເປັນຫົວໜ້າພະແນກສາງ-ຄັງເງິນສົດ, ສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງຊຽງຂວາງ;

8. ຍົກຍ້າຍ ແລະ ແຕ່ງຕັ້ງ**ທ່ານ ນ. ຈັນສະໝອນ ຈັນທິວົງ** ຮອງຫົວໜ້າພະແນກສະຖິຕິແລະບໍລິຫານຂໍ້ມູນ, ກົມຄຸ້ມຄອງສະຖາບັນການເງິນ ເປັນຮອງຫົວໜ້າພະແນກຄຸ້ມຄອງສະຖາບັນການເງິນ, ສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງຊຽງຂວາງ;

9. ຍົກຍ້າຍ ແລະ ແຕ່ງຕັ້ງ**ທ່ານ ສົມສັກ ທຳມະວົງ** ວິຊາການກົມຄຸ້ມຄອງທະນາຄານທຸລະກິດ ເປັນຮອງຫົວໜ້າພະແນກຄຸ້ມຄອງທະນາຄານທຸລະກິດ, ສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງຊຽງຂວາງ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທຸກພາກສ່ວນທີ່ກ່ຽວຂ້ອງ ເພື່ອຊາບ.

**ຫົວໜ້າກົມຈັດຕັ້ງແລະພະນັກງານ**

ທະນາຄານແຫ່ງ ສ ປ ປ ລາວ ★ ກົມຈັດຕັ້ງແລະພະນັກງານ

ພານຸສັກ ແກ່ນວົງພະຈັນ